**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ: 530 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ: 12 ມັງກອນ 2023

# ຂໍ້ຕົກລົງ

# ວ່າດ້ວຍການໂຄສະນາ ສິນຄ້າ ແລະ ການບໍລິການ ຜ່ານສື່ມອນລາຍ

- ອີງຕາມ ກົດໝາຍວ່າດ້ວຍສື່ມອນລາຍ ສະບັບປັບປຸງ ເລກທີ 01/ສພຊ, ລົງ ວັນທີ 4 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມສື່ມອນລາຍ ເລກທີ 347/ສມຊ ລົງວັນທີ 09 ກັນຍາ 2021.

ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ,ມາດຕະການ ກ່ຽວກັບການໂຄສະນາ ສິນຄ້າ ແລະ ການບໍລິການ, ແນໃສ່ເພື່ອເຮັດໃຫ້ຜູ້ບໍລິໂພກໄດ້ຮັບຂໍ້ມູນຂ່າວສານທີ່ຖືກຕ້ອງ, ຕົວຈິງ, ເປັນປະໂຫຍດ; ຮັບປະກັນປະສິດທິພາບໃນການປະສານງານລະຫວ່າງອົງການຄຸ້ມຄອງສື່ມອນລາຍ ກັບ ອົງການຄຸ້ມຄອງຜະລິດຕະພັນສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ ທັງເປັນການສົ່ງເສີມການຊົມໃຊ້ຜະລິດຕະພັນສິນຄ້າ ແລະ ການບໍລິການຂອງ ສປປ ລາວ.

**ມາດຕາ 2 ການໂຄສະນາ ສິນຄ້າ ແລະ ການບໍລິການຜ່ານສື່ມວນຊົນ**

ການໂຄສະນາ ສິນຄ້າ ແລະ ການບໍລິການຜ່ານສື່ມວນຊົນ ແມ່ນ ສື່ມວນຊົນ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ສິນຄ້າ ແລະ ການບໍລິການ ຜ່ານສື່ທັງແບບເດີມ ແລະ ຜ່ານສື່ແບບໃໝ່ໂດຍເກັບຄ່າ ແລະ ບໍ່ເກັບຄ່າ ຕາມນະໂຍບາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 3 ອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1 **ບົດໂຄສະນາ** ໝາຍເຖິງ ຂໍ້ຄວາມໂຄສະນາ ສິນຄ້າ ແລະ ການບໍລິການ ຊຶ່ງໄດ້ພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງດ້ານວິຊາການ ຈາກອົງການຄຸ້ມຄອງຜະລິດຕະພັນ ແລະ ການບໍລິການ ທີ່ກ່ຽວຂ້ອງ ;

2 **ຫົວໂຄສະນາ** ໝາຍເຖິງຜະລິດຕະພັນສື່ມວນຊົນທີ່ໃຊ້ໃນການໂຄສະນາ ຊຶ່ງປະກອບດ້ວຍ: ຂໍ້ຄວາມໂຄສະນາ, ພາບ, ສຽງ, ກຣາຟິກ ຊຶ່ງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດເຜີຍແຜ່ ຜ່ານພາຫະນະສື່ມວນຊົນ ຈາກອົງການຄຸ້ມຄອງສື່ມວນຊົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

3 **ອົງການຄຸ້ມຄອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ** ໝາຍເຖິງອົງການຈັດຕັ້ງລັດທີ່ມີສິດໃນການອອກອະນຸຍາດ ການນໍາເຂົ້າ, ການຜະລິດ, ການຈໍາໜ່າຍ ສິນຄ້າ ແລະ ມີສິດອອກອະນຸຍາດ ການບໍລິການ.

**ມາດຕາ 4 ຂອບເຂດການນໍາໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ຄຸ້ມຄອງ ຕິດຕາມ, ກວດກາ ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໂຄສະນາ, ເຜີຍແຜ່ ສິນຄ້າ ແລະ ການບໍລິການ ຜ່ານສື່ມວນຊົນ ທັງແບບເດີມ ແລະ ແບບໃໝ່ ໃນຂອບເຂດດິນແດນຂອງ ສປປ ລາວ.

**ມາດຕາ 5 ຫຼັກການ ໂຄສະນາ ສິນຄ້າ ແລະ ການບໍລິການ ຜ່ານສື່ມວນຊົນ**

ການໂຄສະນາ ສິນຄ້າ ແລະ ການບໍລິການຜ່ານສື່ມວນຊົນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນ ການອະນຸຍາດຈາກອົງການຄຸ້ມຄອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ;
2. ຮັບປະກັນການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ;
3. ຮັບປະກັນ ເຄົາລົບ ສິລະທໍາ, ຈາລິຍະທໍາ, ວັດທະນະທໍາຂອງຊາດ ແລະ ສິດທິມະນຸດ;
4. ບໍ່ລະເມີດຂໍ້ຫ້າມ ທີ່ກໍານົດໄວ້ໃນກົດໝາຍ ຂອງ ສປປ ລາວ.

## ໝວດທີ 2
## ຂັ້ນຕອນການອະນຸຍາດ ແລະ ການພິຈາລະນາເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນ

### ມາດຕາ 6 ຂັ້ນຕອນການອະນຸຍາດ ເນື້ອໃນບົດໂຄສະນາ

ເຈົ້າຂອງ ສິນຄ້າ ແລະ ການບໍລິການ ມີຈຸດປະສົງເຜີຍແຜ່ຫົວໂຄສະນາຂອງຕົນ ຕ້ອງໄດ້ປະຕິບັດຕາມຂັ້ນຕອນການອະນຸຍາດ ດັ່ງນີ້:

1. ນຳຮ່າງບົດໂຄສະນາຂອງຕົນ ສະເໜີຕໍ່ອົງການຄຸ້ມຄອງ ສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດ ດ້ານເນື້ອໃນ;
2. ນຳບົດໂຄສະນາທີ່ໄດ້ຮັບອະນຸຍາດດ້ານເນື້ອໃນ ໄປຜະລິດເປັນ ຫົວໂຄສະນາ;
3. ນຳຫົວໂຄສະນາທີ່ຜະລິດແລ້ວ ພ້ອມໃບອະນຸຍາດດ້ານເນື້ອໃນ ສະເໜີຕໍ່ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ເພື່ອຂໍໃບອະນຸຍາດເຜີຍແຜ່ຜ່ານສື່ມວນຊົນ.

### ມາດຕາ 7 ການຂໍໃບອະນຸຍາດເຜີຍແຜ່ ຫົວໂຄສະນາ

ເຈົ້າຂອງ ຜະລິດຕະພັນ ສິນຄ້າ ແລະ ການບໍລິການ ທີ່ຕ້ອງການຂໍໃບອະນຸຍາດເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນ ຕ້ອງປະກອບເອກະສານສະເໜີຕໍ່ອົງການຄຸ້ມຄອງສື່ມວນຊົນ ດັ່ງນີ້:

- ໃບສະເໜີຂໍອະນຸຍາດ 01 ສະບັບ;
- ຫົວໂຄສະນາ 01 ຊຸດ.
- ໃບອະນຸຍາດດ້ານເນື້ອໃນຂອງບົດໂຄສະນາ 01 ສະບັບ ຈາກອົງການຄຸ້ມຄອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ;

### ມາດຕາ 8 ການພິຈາລະນາ ແລະ ອອກໃບອະນຸຍາດເຜີຍແຜ່ ຜ່ານສື່ມວນຊົນ

ອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນ ເມື່ອໄດ້ຮັບເອກະສານສະເໜີຂໍອະນຸຍາດເຜີຍແຜ່ຫົວໂຄສະນາ ດັ່ງທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ແຈ້ງໃຫ້ເຈົ້າຂອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ ຊາບ ພາຍໃນ ສາມວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ.

ໃນກໍລະນີ ຫົວໂຄສະນາຖືກພິຈາລະນາບໍ່ໃຫ້ເຜີຍແຜ່, ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງຕ້ອງສົ່ງໜັງສືຊີ້ແຈງ ແລະ ແນະນຳ ໃຫ້ເຈົ້າຂອງສິນຄ້າ ແລະ ການບໍລິການ ຊາບເພື່ອຮູ້ບັນຫາ ແລະ ນຳໄປປັບປຸງ, ແກ້ໄຂ ແລະ ພິຈາລະນາຄືນໃໝ່.

### ມາດຕາ 9 ລັກສະນະຂອງໃບອະນຸຍາດເຜີຍແຜ່ຫົວໂຄສະນາ

ຂໍ້ຕົກລົງສະບັບນີ້ໄດ້ກຳນົດ ລັກສະນະຂອງໃບອະນຸຍາດເຜີຍແຜ່ຫົວໂຄສະນາ ດັ່ງນີ້:

- ເປັນເຈ້ຍສີຂຽວອ່ອນ, ຂະໜາດ A4.
- ດ້ານໜ້າລະບຸຫຼັກຖານ ການອະນຸຍາດ: ຜູ້ອະນຸຍາດ, ຜູ້ໄດ້ຮັບອະນຸຍາດ, ພາຫະນະສື່ທີ່ສາມາດເຜີຍແຜ່, ວັນທີ, ເດືອນ, ປີ ອອກອະນຸຍາດ, ອາຍຸໃບອະນຸຍາດ, ລາຍເຊັນ ແລະ ກາປະທັບ;
- ດ້ານຫຼັງຂອງໃບອະນຸຍາດໄດ້ກຳນົດ: ຂໍ້ຄວາມໂຄສະນາ ແລະ ເງື່ອນໄຂການເຜີຍແຜ່ ທີ່ອະນຸຍາດ;

**ມາດຕາ 10 ອາຍຸ ການນຳໃຊ້ໃບອະນຸຍາດເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນ**

ໃບອະນຸຍາດ ເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນ ມີອາຍຸການນຳໃຊ້ສາມເດືອນ, ເຈົ້າຂອງສິນຄ້າ ແລະ ການບໍລິການ ປະສົງສືບຕໍ່ເຜີຍແຜ່ຫົວໂຄສະນາ ຕ້ອງນຳໃບອະນຸຍາດ ແລະ ຫົວໂຄສະນາເດີມ ສະເໜີ ຂໍຕໍ່ອາຍຸ ນຳອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 11 ເນື້ອໃນ ແລະ ຮູບແບບ ທີ່ຫ້າມເຜີຍແຜ່**

ຂໍ້ຕົກລົງສະບັບນີ້ ຫ້າມເຜີຍແຜ່ ເນື້ອໃນ ແລະ ຮູບແບບ ຫົວໂຄສະນາ ດັ່ງລຸ່ມນີ້:

1. ດູໝິ່ນປຽບທຽບເຊື້ອຊາດ, ສາສະໜາ ຫຼື ສິ່ງສັກກະລະບູຊາຂອງຄົນທົ່ວໄປ;
2. ຜະລິດຕະພັນຢາສູບທຸກຮູບແບບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;
3. ຮູບພາບຂອງ ສິ່ງເສບຕິດ, ພາຊະນະຫຸ້ມຫໍ່ສິ່ງເສບຕິດ, ອຸປະກອນໃຊ້ກັບສິ່ງເສບຕິດ
4. ເຮັດໃຫ້ຄວາມສຳຄັນຂອງສິນຄ້າ ແລະ ການບໍລິການ ຫຼື ອື່ນໆ ໝົດໄປ ໂດຍ ອວດອ້າງສັບພະຄຸນ ແລະ ຄວາມສາມາດໃນການບໍລິການ ເກີນຄວາມເປັນຈິງ;
5. ໂຈມຕີ ຫຼື ໃຊ້ວິທີການປຽບທຽບສິນຄ້າ, ການບໍລິການ ຫຼື ອື່ນໆ ຂອງຜູ້ອື່ນຢ່າງບໍ່ຍຸຕິທຳ;
6. ເຮັດໃຫ້ ເກີດຄວາມລຳຄານ ຫຼື ສ້າງຄວາມຢ້ານກົວໂດຍບໍ່ມີເຫດອັນຄວນ;
7. ໃຊ້ຄວາມເຊື່ອທາງໄສຍະສາດ ຫຼື ໂຊກລາບມາເປັນຂໍ້ຈູງໃຈ;
8. ຮຽນແບບເຄື່ອງໝາຍການຄ້າ, ຄຳຂວັນ ຫຼື ຂໍ້ຄວາມສຳຄັນຈາກການໂຄສະນາຂອງຜູ້ອື່ນອັນເຮັດໃຫ້ຜູ້ອ່ານ, ຜູ້ຟັງ ແລະ ຜູ້ຊົມ ເກີດຄວາມເຂົ້າໃຈຜິດ ແລະ ສັບສົນກັບສິນຄ້າ ແລະ ການບໍລິການນັ້ນ;
9. ໃຊ້ສະຖິຕິ, ຜົນການວິໄຈ ຫຼື ອ້າງອີງລາຍງານທາງວິທະຍາສາດໃນທາງທີ່ບໍ່ສົມຄວນ ຫຼື ເຮັດໃຫ້ເກີດຄວາມເຂົ້າໃຈຜິດໂດຍທີ່ສິນຄ້ານັ້ນບໍ່ມີຄຸນສົມບັດຕາມທີ່ອ້າງ;
10. ອ້າງອີງຕົວບຸກຄົນ ບໍ່ໄດ້ໃຊ້ສິນຄ້າ ແລະ ໃຊ້ບໍລິການນັ້ນຈິງ ຫຼື ອ້າງອີງສະຖາບັນ ທີ່ບໍ່ມີຈິງ;

11. ສິ່ງທີ່ອາດເປັນອັນຕະລາຍແກ່ເດັກ, ເຍົາວະຊົນ, ແມ່ຍິງ ທາງຮ່າງກາຍ ແລະ ຈິດໃຈ ຫຼື ເຮັດໃຫ້ຂາດຄວາມຮູ້ສຶກຜິດຖືກ ຫຼື ໂດຍອາໄສຄວາມຮູ້ເທົ່າບໍ່ເຖິງການຂອງບຸກຄົນດັ່ງກ່າວ ມາເປັນເຄື່ອງມື ຈູງໃຈ ໂດຍບໍ່ສົມຄວນ.

12. ເນື້ອໃນອື່ນ ທີ່ຝືນກັບ ສິດທິມະນຸດ, ສິລະທຳ ແລະ ກົດໝາຍແຫ່ງ ສປປ ລາວ ຫ້າມ.

**ມາດຕາ 12 ຂໍ້ຫ້າມສຳລັບເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການ**

ຫ້າມ ເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການ ມີພຶດຕິກຳດັ່ງລຸ່ມນີ້:

1. ນຳຫົວໂຄສະນາທຸກປະເພດທີ່ບໍ່ໄດ້ມີໃບອະນຸຍາດໄປຕົກລົງກັບອົງການສື່ມວນຊົນ ແລະ ເຜີຍແຜ່ໂດຍພາລະການ;
2. ປ່ຽນແປງ ຂໍ້ຄວາມໂຄສະນາໃນໃບອະນຸຍາດ;
3. ລະເມີດ ເງື່ອນໄຂເຜີຍແຜ່ໃນໃບອະນຸຍາດ.

## ໝວດທີ 4
## ການຄຸ້ມຄອງ ການໂຄສະນາ ສິນຄ້າ ແລະ ການບໍລິການ

**ມາດຕາ 13 ສິດ, ໜ້າທີ່ຂອງ ອົງການຄຸ້ມຄອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ.**

ອົງການຄຸ້ມຄອງຜະລິດຕະພັນ ສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ ມີສິດພິຈາລະນາ ແລະ ອອກໃບອະນຸຍາດດ້ານເນື້ອໃນຂອງປົດໂຄສະນາ ຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 14 ສິດ, ໜ້າທີ່ ຂອງອົງການຄຸ້ມຄອງສື່ມວນຊົນ**

ອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນມີສິດພິຈາລະນາ ແລະ ອອກໃບອະນຸຍາດເຜີຍແຜ່ຫົວໂຄສະນາສິນຄ້າ ແລະ ຫົວໂຄສະນາການບໍລິການ ຜ່ານສື່ມວນຊົນຕາມສິດຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດອອກໃບອະນຸຍາດເຜີຍແຜ່ຫົວໂຄສະນາ ໃຫ້ແກ່ອົງການສື່ມວນຊົນລະດັບສູນກາງ, ຂະແໜງການທີ່ມີຄວາມສາມາດເຜີຍແຜ່ຂໍ້ມູນຂ່າວສານກວມເອົາເນື້ອທີ່ສ່ວນໃຫຍ່ຂອງປະເທດ;

2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂອງແຂວງ, ນະຄອນຫຼວງ ມີສິດອອກໃບອະນຸຍາດໃຫ້ອົງການສື່ມວນຊົນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ເຜີຍແຜ່ຫົວໂຄສະນາ ໃນຂອບເຂດ ແຂວງ, ນະຄອນຫຼວງ ທີ່ອົງການຕົນຮັບຜິດຊອບ;

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການສື່ມວນຊົນໃນການເຜີຍແຜ່ຫົວໂຄສະນາ**

ອົງການສື່ມວນຊົນທີ່ເຮັດບໍລິການມີສິດ ແລະ ໜ້າທີ່ກ່ຽວກັບ ການເຜີຍແຜ່ຫົວໂຄສະນາດັ່ງນີ້:

1. ກວດສອບຄວາມຖືກຕ້ອງດ້ານການອະນຸຍາດ ຂອງຫົວໂຄສະນາກ່ອນການຈະເຜີຍແຜ່;
2. ເຜີຍແຜ່ຫົວໂຄສະນາ ທີ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນຕາມພາລະບົດບາດ, ສິດໜ້າທີ່, ຄວາມຮັບຜິດຊອບ;
3. ສະໜອງ ບັນຊີຫົວໂຄສະນາທັງໝົດຂອງຕົນ ໃຫ້ອົງການຄຸ້ມຄອງສື່ມວນຊົນຊາບ ທຸກໆ ສາມເດືອນ.

**ມາດຕາ 16 ສິດ, ໜ້າທີ່ ແລະ ພັນທະ ຂອງ ເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການ**

ເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການມີສິດ, ໜ້າທີ່ ແລະ ພັນທະ ດັ່ງນີ້:

1 ມີສິດສະເໜີຂໍອະນຸຍາດເຜີຍແຜ່ຫົວໂຄສະນາຕາມກົດໝາຍ ແລະ ລະບຽບການ;

2 ມີສິດໄດ້ຮັບການຊີ້ແຈ້ງຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນກໍລະນີຫົວໂຄສະນາບໍ່ຖືກອະນຸຍາດເຜີຍແຜ່ຜ່ານສື່ມວນຊົນ;

3 ມີພັນທະເສຍຄ່າທຳນຽມ, ຄ່າບໍລິການກວດຜ່ານດ້ານເນື້ອໃນ ແລະ ຂໍອະນຸຍາດເຜີຍແຜ່ຫົວໂຄສະນາຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

## ໝວດທີ 5
## ການກວດກາ

**ມາດຕາ 17 ການກວດກາ**

ອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນ, ອົງການຄຸ້ມຄອງ ສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ ເປັນຜູ້ກວດກາ, ຕິດຕາມ ການເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນທຸກປະເພດ ຢູ່ພາຍໃນປະເທດ.

**ມາດຕາ 18 ເນື້ອໃນການກວດກາ**

ເນື້ອໃນການກວດກາ ປະກອບດ້ວຍ:

1. ໃບຢັ້ງຢືນຄວາມຖືກຕ້ອງ ເນື້ອໃນ ຂອງຫົວໂຄສະນາ;
2. ໃບອະນຸຍາດເຜີຍແຜ່ຫົວໂຄສະນາຜ່ານສື່ມວນຊົນ;
3. ເງື່ອນໄຂອະນຸຍາດເຜີຍແຜ່ຫົວໂຄສະນາໃນໃບອະນຸຍາດ;
4. ເອກະສານອື່ນທີ່ກ່ຽວຂ້ອງກັບຫົວໂຄສະນາ.

**ມາດຕາ 19 ຮູບການ ແລະ ເປົ້າໝາຍ ຂອງການກວດກາ**

ຮູບການ ແລະ ເປົ້າໝາຍຂອງການ ກວດກາ, ຕິດຕາມ ການໂຄສະນາ ສິນຄ້າ ແລະ ການບໍລິການ ຜ່ານສື່ມວນຊົນ ແມ່ນໄດ້ກຳນົດໄວ້ໃນ ມາດຕາ 77, 78 ຂອງກົດໝາຍວ່າດ້ວຍສື່ມວນຊົນ(ສະບັບປັບປຸງ).

## ໝວດທີ 6
## ນະໂຍບາຍ ແລະ ມາດຕະການ

**ມາດຕາ 20 ນະໂຍບາຍຕໍ່ ຜະລິດຕະພັນສິນຄ້າ ແລະ ການບໍລິການ ທີ່ເປັນຂອງລາວ**

ຜະລິດຕະພັນສິນຄ້າ ແລະ ການບໍລິການ ທີ່ເປັນຂອງລາວ ເມື່ອໄດ້ຮັບການຢັ້ງຢືນຈາກອົງການຄຸ້ມຄອງສິນຄ້າ ແລະ ການບໍລິການທີ່ກ່ຽວຂ້ອງແລ້ວ, ອົງການຄຸ້ມຄອງສື່ມວນຊົນ ຕ້ອງພິຈາລະນາການອະນຸຍາດເຜີຍແຜ່ພາຍໃນໜຶ່ງອັນລັດຖະການ ແລະ ອົງການສື່ມວນຊົນ ຕ້ອງຫຼຸດຄ່າບໍລິການລົງ ຕາມກົດໝາຍ ຂອງ ສປປ ລາວ.

**ມາດຕາ 21 ນະໂຍບາຍຕໍ່ຜູ້ມີຜົນງານ ໃນການໂຄສະນາ ສິນຄ້າ ແລະ ການບໍລິການ**

ອົງການສື່ມວນຊົນ ທີ່ເຮັດການເຜີຍແຜ່ຫຼືໂຄສະນາໄດ້ດີ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຈະໄດ້ຮັບການຍ້ອງຍໍຊົມເຊີຍ.

**ມາດຕາ 22 ມາດຕະການຕໍ່ ຜູ້ລະເມີດ ໃນການໂຄສະນາ ສິນຄ້າ ແລະ ການບໍລິການ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ລະເມີດຂໍ້ຕົກລົງສະບັບນີ້ ກ່ຽວກັບ ການໂຄສະນາສິນຄ້າ ແລະ ໂຄສະນາການບໍລິການ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ ທາງແພ່ງ ແລະ ທາງອາຍາ ຕາມກໍລະນີໜັກເບົາ.

**ມາດຕາ 23 ມາດຕະການປັບປາໃໝ**

ໃນກໍລະນີ ບຸກຄົນ, ນິຕິນິບຸກຄົນ ແລະ ການຈັດຕັ້ງເຜີຍແຜ່ຫຼືໂຄສະນາ ທີ່ບໍ່ໄດ້ຮັບການອະນຸຍາດ ແລະ ປອມແປງໃບອະນຸຍາດ, ຈະຖືກ ປັບໃໝ ແລະ ລົງວິໄນ ດັ່ງລຸ່ມນີ້:

1. ຕໍ່ອົງການສື່ມວນຊົນ ຈະຖືກປັບໃໝ ເປັນເງິນ 500,000 ກີບ(ຫ້າແສນກີບ) ຕໍ່ໜຶ່ງຄັ້ງອອກໂຄສະນາ;
2. ຕໍ່ເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການ ຈະຖືກປັບໃໝ ເປັນເງິນ 1,000,000 ກີບ(ໜຶ່ງລ້ານກີບ) ຕໍ່ໜຶ່ງຄັ້ງອອກໂຄສະນາ;

3. ໃນກໍລະນີມີສັນຍາເຜີຍແຜ່ ລະຫວ່າງ ອົງການສື່ມວນຊົນ ກັບ ເຈົ້າຂອງສິນຄ້າ ແລະ ເຈົ້າຂອງການບໍລິການ, ສັນຍານັ້ນຖືເປັນໂມຄະ.

4. ໃນກໍລະນີເຜີຍແຜ່ຫົວໂຄສະນາທີ່ມີເນື້ອໃນໄດ້ຫ້າມ, ຜູ້ກ່ຽວຂ້ອງ ຈະຕ້ອງຮັບຜິດຊອບຕໍ່ ກົດໝາຍຂອງ ສປປລາວ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 24 ການຈັດຕັ້ງປະຕິບັດ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມອບໃຫ້ອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນ, ອົງການສື່ມວນຊົນຕ່າງໆໃນທົ່ວປະເທດ ແລະ ອົງການຄຸ້ມຄອງຜະລິດຕະພັນສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງ ໄດ້ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 25 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ຈົນກ່ວາຈະມີການປ່ຽນແປງໃໝ່.

ຂໍ້ກຳນົດ, ກົດລະບຽບ, ຂໍ້ຕົກລົງ ແລະ ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ສວນສະຫວັນ ວິຍະເກດ